**ມິຊຊາອາທິດທີ 20 ກຳນົດທຳມະດາປີ C**

**ວັນທີ 18 ສິງຫາ 2019**



**ພຣະວໍລະສານໂດຍນັກບຸນລູກາ 12, 49-52**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບພວກສາວົກວ່າ ເຮົາໄດ້ນຳເອົາໄຟມາໃນໂລກນີ້ ແລະເຮົາມີຄວາມປາດຖະໜາຢ່າງແຮງກ້າຢາກເຫັນມັນໄໝ້ລຸກຂຶ້ນເຫລືອທີ່ສຸດ! ເຮົາຕ້ອງຮັບສິນລ້າງແລະເຮົາມີຄວາມຫວາດຫວັ່ນໃຈເຫລືອທີ່ສຸດຈົນກວ່າຈະສຳເລັດໄປ.

ພວກເຈົ້າຄິດວ່າເຮົາມາເພື່ອນຳສັນຕິສຸກມາໃຫ້ໂລກບໍ? ບໍ່ແມ່ນດອກ. ເຮົາບອກພວກເຈົ້າວ່າ ເຮົານຳເອົາຄວາມແຕກແຍກມາໃຫ້. ດ້ວຍວ່າແຕ່ນີ້ໄປ, ເຮືອນທີ່ມີຫ້າຄົນຈະມີການແຕກແຍກ: ສາມຈະສູ້ກັບສອງແລະສອງຈະສູ້ກັບສາມ. ຈະມີການຂັດສູ້ລະຫວ່າງພໍ່ກັບລູກຊາຍ ແລະລູກຊາຍກັບພໍ່. ລະຫວ່າງແມ່ກັບລູກສາວແລະລູກສາວກັບແມ່. ລະຫວ່າງແມ່ຍ່າກັບລູກໄພ້ແລະລູກໄພ້ກັບແມ່ຍ່າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 12, 49-52**

ອາທິດທີ່ຜ່ານມາ, ວາຈາຂອງພຣະເຈົ້າໄດ້ຕັກເຕືອນແລະສອນພວກເຮົາໃຫ້ຮູ້ຈັກຕື່ນເຝົ້າແລະຕຽມພ້ອມຢູ່ສະເໝີ. ຍ້ອນວ່າພວກເຮົາບໍ່ຮູ້ຈັກເວລາທີ່ນາຍຈະກັບມາຈາກງານດອງ. ແລະລາງວັນຂອງການຕື່ນເຝົ້ານີ້ຄືການໄດ້ເປັນມິສະຫາຍແລະນັ່ງຮ່ວມໂຕະກັບນາຍໃນອານາຈັກສະຫວັນ.

ວັນນີ້ພຣະເຢຊູເຈົ້າສືບຕໍ່ບອກສອນພວກເຮົາໂດຍໃຊ້ຮູບພາບຂອງໄຟ ແລະພຣະອົງກໍປາດຖະໜາໃຫ້ໄຟນີ້ລຸກໄໝ້ຂຶ້ນ. ພຣະອົງມາໃນໂລກນີ້ບໍ່ແມ່ນນຳເອົາສັນຕິສຸກມາໃຫ້ໂລກ ແຕ່ນຳເອົາຄວາມແຕກແຍກມາໃຫ້. ເມື່ອເວລາພວກເຮົາຟັງວາຈາຂອງພຣະເຈົ້າຕອນນີ້ທຳໃຫ້ພວກເຮົາມີຄວາມສັບສົນແລະເຂົ້າໃຈຍາກ. ເປັນຫຍັງພຣະເຢຊູເຈົ້າຈຶ່ງກ່າວແບບນີ້? ຄຳເວົ້າຂອງພຣະອົງວັນນີ້ເບິ່ງຄືກົງກັນຂ້າມກັບຄຳເທດສອນທີ່ພວກເຮົາໄດ້ຟັງແລະຮູ້ຈັກ.

ຫລັງຈາກພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ, ຄຳທຳອິດທີ່ພຣະອົງກ່າວກັບພວກສາວົກຄື: « ສັນຕິສຸກຈົ່ງມີແກ່ພວກເຈົ້າ ». ແຕ່ວັນນີ້, ພຣະອົງພັດກ່າວວ່າ: ເຮົາບໍ່ໄດ້ນຳເອົາສັນຕິສຸກມາໃຫ້ໂລກ, ແຕ່ຄວາມແຕກແຍກ. ໝາຍຄວາມວ່າແນວໃດ? ແລະໄຟທີ່ພຣະເຢຊູເຈົ້າປາດຖະໜາໃຫ້ລຸກໄໝ້ຂຶ້ນນີ້ແມ່ນຫຍັງ? ເພື່ອຈະເຂົ້າໃຈຄວາມໝາຍແລະຄຳຖາມທີ່ພວກເຮົາຕັ້ງຂຶ້ນມານີ້ ໃຫ້ພວກເຮົາສັງເກດສິ່ງທີ່ພຣະເຢຊູເຈົ້າກ່າວໃນວາຈາຂອງພຣະອົງວັນນີ້ອັນແມ່ນ: ໄຟ, ສິນລ້າງແລະຄວາມແຕກແຍກ. ສິ່ງທີ່ຈະຊ່ວຍໃຫ້ພວກເຮົາເຂົ້າໃຈຄວາມໝາຍຂອງໄຟໃນທີ່ນີ້ຄື ສິນລ້າງ. ດັ່ງນັ້ນ, ໄຟທີ່ນັກບຸນລູກາໝາຍເຖິງນີ້ຄືອົງພຣະຈິດເຈົ້າ. ແລະໄຟທີ່ພຣະເຢຊູເຈົ້າປາດຖະໜາໃຫ້ລຸກໄໝ້ນີ້ ຄືອົງພຣະຈິດເຈົ້າຈະເຜົາສູນສິ່ງທີ່ບໍ່ດີ, ບໍ່ຈົບບໍ່ງາມເພື່ອທຳໃຫ້ສັກສິດ. ແລະອົງພຣະຈິດເຈົ້າຍັງເປັນອົງແຫ່ງຄວາມສະວ່າງ, ຄວາມຈິງແລະຄວາມຮັກ. ແຕ່ເປັນຫຍັງພຣະເຢຊູເຈົ້າຈຶ່ງກ່າວວ່າພຣະອົງນຳເອົາຄວາມແຕກແຍກມາໃຫ້ໂລກ? ຍ້ອນວ່າຜູ້ທີ່ຢູ່ໃນຄວາມສະວ່າງຈະຂັດສູ້ກັບຜູ້ທີ່ຢູ່ໃນຄວາມມືດ. ຜູ້ທີ່ເວົ້າຄວາມຈິງຈະເປັນສັດຕູກັບຜູ້ທີ່ກ່າວຄວາມເທັດ. ແລະຜູ້ທີ່ຢູ່ໃນຄວາມຮັກຂອງພຣະເຈົ້າຈະເປັນປໍລະປັກກັບຜູ້ທີ່ຢູ່ໃນຄວາມຄຽດຊັງ. ດັ່ງນັ້ນ, ຖ້າພວກເຮົາເປັນລູກຂອງຄວາມສວ່າງ, ຄວາມຈິງແລະຄວາມຮັກ, ພວກເຮົາກໍມີຄວາມສາມັກຄີຊຶ່ງກັນແລະກັນແລະເປັນໜຶ່ງດຽວໃນອົງພຣະຈິດເຈົ້າ. ເໝືອນດັ່ງພຣະເຢຊູເຈົ້າເປັນໜຶ່ງດຽວໃນພຣະບິດາແລະພຣະຈິດ. ແລະໝາກຜົນຂອງຄວາມເປັນໜຶ່ງດຽວນີ້ຄືຄວາມຮັກແລະສັນຕິສຸກ. ຍ້ອນພຣະເຈົ້າຂອງພວກເຮົາເປັນພຣະເຈົ້າແຫ່ງຄວາມຮັກ. ເມື່ອພວກເຮົາເຂົ້າໃຈດັ່ງນີ້ແລ້ວ, ກໍຈະເຫັນວ່າຄຳສອນຂອງພຣະເຢຊູເຈົ້າໃນວັນນີ້ບໍ່ໄດ້ຂັດແຍ່ງແລະກົງກັນຂ້າມກັບສິ່ງທີ່ພຣະອົງໄດ້ກ່າວມາກ່ອນນັ້ນ, ແຕ່ທຳໃຫ້ສິ່ງທີ່ພຣະອົງກ່າວໄວ້ນັ້ນມີຄວາມໝາຍເລິກເຊິ່ງກວ່າອີກ.

ຂໍໃຫ້ວາຈາຂອງພຣະເຈົ້າວັນນີ້ເປັນໄຟທີ່ລຸກໄໝ້ໃນຈິດໃຈຂອງພວກເຮົາ ເພື່ອດວງໃຈຂອງພວກເຮົາຈະໄດ້ຮ້ອນຮົນດ້ວຍຄວາມຮັກແລະຄວາມຈິງຈາກອົງພຣະຈິດເຈົ້າ. ເພື່ອພວກເຮົາຈະໄດ້ເປັນພິຍານເຖິງຄວາມຮັກແລະຄວາມຈິງນີ້ໃນຊີວິດຂອງພວກເຮົານັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ